Update on 24 February 2012

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

0352

ກະຊວງພະລັງງານ ແລະ ບໍ່ແຮ່ ເລກທີ.............. /ພບ

ນະຄອນຫຼວງວຽງຈັນ, ວັນທີ.............. 13 03 12

# ຂໍ້ຕົກລົງ
# ວ່າດ້ວຍ ລະບຽບການຂໍອະນຸຍາດນໍາເຂົ້າ ແລະ ສົ່ງອອກ ແຮ່ທາດ ແລະ ຜະລິດຕະພັນແຮ່ທາດ

- ອີງຕາມກົດໝາຍວ່າດ້ວຍແຮ່ທາດ ສະບັບເລກທີ 04/ສພຊ, ລົງວັນທີ 08/12/2008;
- ອີງຕາມກົດໝາຍວ່າດ້ວຍວິສາຫະກິດ ສະບັບເລກທີ 11/ສພຊ, ລົງວັນທີ 9 ພະຈິກ 2005;
- ອີງຕາມກົດໝາຍວ່າດ້ວຍອຸດສາຫະກໍາປຸງແຕ່ງ ສະບັບເລກທີ 01/99/ສພຊ, ລົງວັນທີ 3 ເມສາ 1999;
- ອີງຕາມດໍາລັດວ່າດ້ວຍ ການນໍາເຂົ້າ ແລະ ການສົ່ງອອກສິນຄ້າ ສະບັບເລກທີ 114/ລບ, ລົງວັນທີ 6 ເມສາ 2011;
- ອີງຕາມດໍາລັດ ວ່າດ້ວຍ ຂັ້ນຕອນການອອກໃບອະນຸຍາດນໍາເຂົ້າສິນຄ້າ ສະບັບເລກທີ 180/ນຍ, ລົງວັນທີ 7 ກໍລະກົດ 2009.

## ລັດຖະມົນຕີວ່າການ ກະຊວງ ພະລັງງານ ແລະ ບໍ່ແຮ່ ອອກຂໍ້ຕົກລົງ:

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1. ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ວາງອອກເພື່ອກໍານົດຫຼັກການ, ລະບຽບການ ແລະ ມາດຕະການເພື່ອຄຸ້ມຄອງການນໍາເຂົ້າ ແລະ ສົ່ງອອກແຮ່ທາດ ແລະ ຜະລິດຕະພັນແຮ່ທາດ ລວມທັງການນໍາເຂົ້າມາປຸງແຕ່ງໂດຍບໍ່ໄດ້ຈໍາກັດປະລິມານ, ແນໃສ່ຄຸ້ມຄອງການຊື້-ຂາຍແຮ່ທາດ ແລະ ຜະລິດຕະພັນແຮ່ທາດໃຫ້ເກີດຜົນປະໂຫຍດສູງສຸດຕໍ່ເສດຖະກິດຂອງຊາດ.

**ມາດຕາ 2. ອະທິບາຍຄໍາສັບ**

ຄໍາສັບທີ່ນໍາໃຊ້ໃນຂໍ້ຕົກລົງສະບັບນີ້ມີຄວາມໝາຍດັ່ງນີ້:

1. "ແຮ່ທາດ" ໝາຍເຖິງທາດທີ່ບໍ່ມີຊີວິດ ຊຶ່ງເກີດຂຶ້ນໂດຍທໍາມະຊາດ, ບໍ່ສາມາດສ້າງຂຶ້ນໃໝ່ໄດ້, ມີຄຸນລັກສະນະທາງດ້ານເຄມີ ແລະ ວັດຖຸວິທະຍາ ຢູ່ໃນພາວະແຂງ, ພາວະແຫຼວ ແລະ ພາວະອາຍ.

2. "ຜະລິດຕະພັນແຮ່ທາດ" ໝາຍເຖິງແຮ່ທາດທີ່ໄດ້ຜ່ານການປຸງແຕ່ງເປັນຜະລິດຕະພັນສໍາເລັດຮູບ ຫຼື ເຄິ່ງສໍາເລັດຮູບ.

ແຮ່ທາດ ແລະ ຜະລິດຕະພັນແຮ່ທາດ ທີ່ກ່າວມາຂ້າງເທິງ ໄດ້ລະບຸໄວ້ໃນໝວດລະຫັດເຄົ້າ 2601 ຫາ 2617 (ຍົກເວັ້ນ 2612) ຂອງ ສາລະບານອັດຕາພາສີ ຂອງ ສປປ ລາວ.

**ມາດຕາ 3. ຂອບເຂດການນຳໃຊ້**

ຂໍ້ຕົກລົງສະບັບນີ້ ນຳໃຊ້ສຳລັບບຸກຄົນ, ນິຕິບຸກຄົນທັງພາຍໃນ ແລະ ຕ່າງປະເທດ ທີ່ດຳເນີນການນຳເຂົ້າ ແລະ ສົ່ງອອກ ແຮ່ທາດ ແລະ ຜະລິດຕະພັນແຮ່ທາດ

## ໝວດທີ 2
## ການນຳເຂົ້າ ຫຼື ສົ່ງອອກ ແຮ່ທາດ ແລະ ຜະລິດຕະພັນແຮ່ທາດ

ມາດຕາ 4. ເງື່ອນໄຂຂອງການນຳເຂົ້າ ແລະ ສົ່ງອອກແຮ່ທາດ ແລະ ຜະລິດຕະພັນແຮ່ທາດ

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທັງພາຍໃນ ແລະ ຕ່າງປະເທດ ມີສິດນຳເຂົ້າ ຫຼື ສົ່ງອອກ ແຮ່ທາດ ແລະ ຜະລິດຕະພັນແຮ່ທາດ ໂດຍສອດຄ່ອງກັບລະບຽບການ ແລະ ກົດໝາຍຂອງ ສປປ ລາວ.

**ມາດຕາ 5. ການນຳເຂົ້າ ແລະ ສົ່ງອອກແຮ່ທາດ ແລະ ຜະລິດຕະພັນແຮ່ທາດ**

ການນຳເຂົ້າ ແລະ ການສົ່ງອອກ ແຮ່ທາດ ແລະ ຜະລິດຕະພັນແຮ່ທາດ ຕ້ອງໄດ້ຂໍອະນຸຍາດຈາກ ກົມບໍ່ແຮ່, ກະຊວງ ພະລັງງານ ແລະ ບໍ່ແຮ່.

**ມາດຕາ 6. ເອກະສານປະກອບຂໍອະນຸຍາດນຳເຂົ້າ ຫຼື ສົ່ງອອກ ແຮ່ທາດ ແລະ ຜະລິດຕະພັນແຮ່ທາດ**

6.1 ເອກະສານທີ່ຕ້ອງປະກອບເພື່ອຂໍອະນຸຍາດນຳເຂົ້າ ແຮ່ທາດ ແລະ ຜະລິດຕະພັນແຮ່ທາດ ມີດັ່ງນີ້:

1. ໃບຄຳຮ້ອງຂໍອະນຸຍາດນຳເຂົ້າ ແຮ່ທາດ ແລະ ຜະລິດຕະພັນແຮ່ທາດ;
2. ສຳເນົາຂອງເອກະສານຕາມແຕ່ລະກໍລະນີ:

- ໃບທະບຽນວິສາຫະກິດ ຫຼື ໃບທະບຽນສຳປະທານທີ່ຖືກຕ້ອງຕາມລະບຽບກົດໝາຍ (ສຳລັບວິສາຫະກິດ ທີ່ ຢູ່ ສປປ ລາວ); ຫຼື
- ເອກະສານຂຶ້ນທະບຽນດຳເນີນທຸລະກິດ ອອກໃຫ້ໂດຍທາງການຂອງປະເທດກ່ຽວຂ້ອງທີ່ຖືກຕ້ອງຕາມລະບຽບກົດໝາຍ (ສຳລັບວິສາຫະກິດທີ່ບໍ່ຢູ່ ສປປ ລາວ).

ໃນກໍລະນີເອກະສານເປັນພາສາຕ່າງປະເທດຕ້ອງໄດ້ແປເປັນພາສາລາວ ໂດຍມີການຢັ້ງຢືນ ຈາກ ສຳນັກງານທະບຽນສານຂອງ ສປປ ລາວ.

6.2 ເອກະສານທີ່ຕ້ອງປະກອບເພື່ອຂໍອະນຸຍາດສົ່ງອອກ ແຮ່ທາດ ແລະ ຜະລິດຕະພັນແຮ່ທາດມີດັ່ງນີ້:

1. ໃບຄຳຮ້ອງຂໍອະນຸຍາດສົ່ງອອກ ແຮ່ທາດ ແລະ ຜະລິດຕະພັນແຮ່ທາດ;
2. ໃບທະບຽນວິສາຫະກິດ ຫຼື ໃບທະບຽນສຳປະທານທີ່ຖືກຕ້ອງຕາມລະບຽບກົດ ໝາຍ;
3. ສຳເນົາຂອງເອກະສານຕາມແຕ່ລະກໍລະນີ:

- ໃບອະນຸຍາດຂຸດຄົ້ນແຮ່ທາດ (ກໍລະນີຜູ້ສົ່ງອອກໄດ້ຮັບສຳປະທານ ຈາກ ລັດຖະບານ); ຫຼື

- ສັນຍາສະໜອງຜະລິດຕະພັນແຮ່ທາດຈາກເຈົ້າຂອງສິດສຳປະທານ (ກໍລະນີຜູ້ສົ່ງອອກບໍ່ໄດ້ຮັບສຳປະທານ ຈາກ ລັດຖະບານ).

**ມາດຕາ 7. ໃບອະນຸຍາດນຳເຂົ້າ ແລະ ສົ່ງອອກແຮ່ທາດ ແລະ ຜະລິດຕະພັນແຮ່ທາດ**

ໃບອະນຸຍາດນຳເຂົ້າ ແລະ ສົ່ງອອກ ແຮ່ທາດ ແລະ ຜະລິດຕະພັນແຮ່ທາດ ໃຫ້ປະຕິບັດຕາມດຳລັດຂອງ ນາຍົກລັດຖະມົນຕີ ສະບັບເລກທີ 180/ນຍ, ລົງວັນທີ 7 ມິຖຸນາ 2009. ໃບອະນຸຍາດດັ່ງກ່າວບໍ່ສາມາດໂອນໃຫ້ຜູ້ອື່ນໄດ້.

**ມາດຕາ 8. ຄ່າທຳນຽມ ແລະ ຄ່າບໍລິການ**

ຄ່າທຳນຽມ ແລະ ຄ່າບໍລິການ ສຳລັບການອອກໃບອະນຸຍາດ ໃຫ້ປະຕິບັດຕາມ ລັດຖະບັນຍັດຂອງປະທານປະເທດ ສະບັບເລກທີ 03/ປປທ, ລົງວັນທີ 19 ພະຈິກ 2008.

**ມາດຕາ 9. ການສະໜອງເອກະສານໃນເວລານຳເຂົ້າ ຫຼື ສົ່ງອອກ ແຮ່ທາດ ແລະ ຜະລິດຕະພັນແຮ່ທາດຕົວຈິງ**

ໃນເວລານຳເຂົ້າ ຫຼື ສົ່ງອອກ ແຮ່ທາດ ແລະ ຜະລິດຕະພັນແຮ່ທາດ ຕົວຈິງ, ຜູ້ນຳເຂົ້າ ຫຼື ສົ່ງອອກ ຕ້ອງສະແດງເອກະສານດັ່ງ ຕໍ່ໄປນີ້ໃຫ້ແກ່ເຈົ້າໜ້າທີ່ພາສີ:

1. ໃບອະນຸຍາດນຳເຂົ້າ ຫຼື ສົ່ງອອກ ແຮ່ທາດ ແລະ ຜະລິດຕະພັນແຮ່ທາດ ທີ່ອອກພາຍໃຕ້ຂໍ້ຕົກລົງສະບັບນີ້; ແລະ
2. ເອກະສານອື່ນໆຕາມລະບຽບການທາງພາສີ.

## ໝວດທີ III
## ບົດບັນຍັດສຸດທ້າຍ

**ມາດຕາ 10. ການຈັດຕັ້ງປະຕິບັດ**

ມອບໃຫ້ ກົມບໍ່ແຮ່ ເປັນເຈົ້າການໃນການປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງເພື່ອຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ໃຫ້ສອດຄ່ອງ ແລະ ມີປະສິດທິຜົນ.

**ມາດຕາ 11. ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ລັດຖະມົນຕີວ່າການກະຊວງພະລັງງານ ແລະ ບໍ່ແຮ່,

ສຸລິວົງ ດາລາວົງ